ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

6580
ເລກທີ ................../ກຊສ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ນະຄອນຫຼວງວຽງຈັນ, ວັນທີ ...15 ກັນຍາ 2014

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດມາດຖານດ້ານບໍລິການ ໃນການຂຶ້ນທະບຽນທີ່ດິນ, ອອກໃບຕາດິນ ແລະ ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ

- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 435/ນຍ, ລົງວັນທີ 28 ພະຈິກ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ອີງຕາມການຄົ້ນຄວ້າສະເໜີ ຂອງກົມຄຸ້ມຄອງທີ່ດິນ ສະບັບເລກທີ .2283.... /ກຊສ.ກທດ, ລົງວັນທີ 05 ກັນຍາ 2014,

ລັດຖະມົນຕີວ່າການ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕົກລົງ:

**ມາດຕາ 1. ຈຸດປະສົງ**

ເພື່ອຈັດຕັ້ງຜັນຂະຫຍາຍ ແລະ ກຳນົດມາດຖານດ້ານບໍລິການ ໃນການຂຶ້ນທະບຽນທີ່ດິນ, ອອກໃບຕາດິນ ແລະ ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ໃຫ້ເຂົ້າສູ່ລະບົບ, ແນໃສ່ປັບປຸງປະສິດທິພາບດ້ານການບໍລິການປະຊາຊົນ ຂອງຂະແໜງຄຸ້ມຄອງທີ່ດິນ ກ່ຽວກັບວຽກງານຂຶ້ນທະບຽນທີ່ດິນ, ອອກໃບຕາດິນ ແລະ ຈົດທະບຽນນິຕິກຳກ່ຽວກັບທີ່ດິນ ໃຫ້ມີຄວາມສະດວກວ່ອງໄວ, ມີຄວາມໂປ່ງໃສ, ມີກຳນົດເວລາອັນແນ່ນອນ, ສາມາດຕິດຕາມກວດກາໄດ້ ແລະ ຮັບປະກັນໄດ້ທັງປະລິມານ ແລະ ຄຸນນະພາບຂອງວຽກງານ.

**ມາດຕາ 2. ມາດຖານດ້ານເວລາ ໃນການຂຶ້ນທະບຽນທີ່ດິນ, ອອກໃບຕາດິນ ແລະ ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ**

ການຂຶ້ນທະບຽນທີ່ດິນ, ອອກໃບຕາດິນ ແລະ ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ຂອງຂະແໜງຄຸ້ມຄອງທີ່ດິນ ໃນຂອບເຂດທົ່ວປະເທດ ໃຫ້ປະຕິບັດມາດຖານດ້ານບໍລິການ ດັ່ງນີ້:

2.1 ການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ຢ່າງເປັນລະບົບ ແລະ ແບບສະເພາະຕອນ ໃຫ້ສຳເລັດພາຍໃນ 90 ວັນລັດຖະການ;

2.2 ການຈົດທະບຽນທີ່ດິນ (ຊື້-ຂາຍ, ມອບຊັບ, ຍົກຊັບ, ສືບທອດມູນມໍລະດົກ ແລະ ແລກປ່ຽນ) ແບບໝົດຕອນ ໃຫ້ສຳເລັດພາຍໃນ 15 ວັນລັດຖະການ ໃນນີ້ :

- ຢູ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ໃຫ້ໃຊ້ເວລາ 05 ວັນລັດຖະການ;
- ຢູ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ໃຫ້ໃຊ້ເວລາ 10 ວັນລັດຖະການ;

2.3 ການຈົດທະບຽນສັນຍາຄ້ຳປະກັນກູ້ຢືມ ແລະ ສັນຍາເຊົ່າ ໃຫ້ສຳເລັດພາຍໃນ 03 ວັນລັດຖະການ;

2.4 ການຈົດທະບຽນເລີກຖອນສັນຍາຄ້ຳປະກັນກູ້ຢືມ ແລະ ລຶບລ້າງສິດບໍ່ຂາດຕົວປະເພດຕ່າງໆ ໃຫ້ສຳເລັດພາຍໃນ 02 ວັນລັດຖະການ;

2.5 ການອອກໃບຕາດິນໃໝ່ແທນໃບຕາດິນທີ່ຖືກທຳລາຍ, ແຕ່ເຫຼືອຮ່ອງຮອຍທີ່ເປັນຫຼັກຖານຢັ້ງຢືນໄດ້ ຫຼື ໃບຕາດິນ ທີ່ຖືກອັດແຂງ ໃຫ້ສຳເລັດພາຍໃນ 10 ວັນລັດຖະການ;

2.6 ການອອກໃບຕາດິນໃໝ່ແທນໃບຕາດິນທີ່ຖືກເສຍຫາຍ ຫຼື ຖືກທຳລາຍບໍ່ເຫຼືອຮ່ອງຮອຍທີ່ເປັນຫຼັກຖານໄດ້, ພາຍຫຼັງຄົບກຳນົດປະກາດ ສາມສິບວັນ ແລະ ມີຄຳຕັດສິນຂອງສານແລ້ວ ໃຫ້ສຳເລັດພາຍໃນ 10 ວັນລັດຖະການ;

2.7 ການຈົດທະບຽນແບ່ງແຍກຕອນດິນ ຫຼື ໂຮມຕອນດິນເຂົ້າກັນ (ຊື້-ຂາຍ, ມອບຊັບ, ຍົກຊັບ, ແລກປ່ຽນ ແລະ ສືບທອດມູນມໍລະດົກ) ໃຫ້ສຳເລັດພາຍໃນ 45 ວັນລັດຖະການ;

2.8 ການສະເໜີຂໍກວດກາເຂດແດນຄືນໃໝ່ ໃຫ້ສຳເລັດພາຍໃນ 10 ວັນລັດຖະການ;

2.9 ການສະເໜີຂໍອັດສຳເນົາຂໍ້ມູນທີ່ດິນ ໃຫ້ສຳເລັດພາຍໃນ 01 ວັນລັດຖະການ;

2.10 ການອອກໃບຕາດິນ ຈາກການຫັນສິດໃຊ້ທີ່ດິນຂອງລັດ ເປັນສິດນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ໃຫ້ສຳເລັດພາຍໃນ 15 ວັນລັດຖະການ ຫຼັງຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ໄດ້ຮັບຂໍ້ຕົກລົງ ແລະ ແຈ້ງການ ກ່ຽວກັບການຫັນສິດໃຊ້ທີ່ດິນຂອງລັດ ເປັນສິດນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ;

2.11 ການຂໍອອກໃບຢັ້ງຢືນຄວາມຖືກຕ້ອງ ຂອງໃບຕາດິນ ໃຫ້ສຳເລັດພາຍໃນ 03 ວັນລັດຖະການ.

### ມາດຕາ 3. ການຕິດຕາມກວດກາ

ກົມຄຸ້ມຄອງທີ່ດິນ ເປັນເຈົ້າການຕິດຕາມກວດກາ ການຈັດຕັ້ງປະຕິບັດມາດຖານດ້ານການບໍລິການ ໃນການຂຶ້ນທະບຽນທີ່ດິນ, ອອກໃບຕາດິນ ແລະ ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ຂອງຂະແໜງຄຸ້ມຄອງທີ່ດິນໃນຂອບເຂດທົ່ວປະເທດ ແລະ ໃຫ້ມີການປະເມີນຜົນດ້ານການບໍລິການ, ການບໍລິຫານ ແລະ ການດຳເນີນງານ ຢ່າງເປັນປົກກະຕິ ເພື່ອມີມາດຕະການຢ່າງເຂັ້ມງວດ ໃນການນຳສະເໜີຄະນະນຳ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປັບປຸງແກ້ໄຂຂອດວຽກຕ່າງໆ ລວມທັງພະນັກງານ ທີ່ເຫັນວ່າຍັງກົດໜ່ວງ, ອັດຕັນ ແລະ ແກ່ຍາວເວລາ ໃນການໃຫ້ບໍລິການແກ່ປະຊາຊົນ.

### ມາດຕາ 4. ການຈັດຕັ້ງປະຕິບັດ

ມອບໃຫ້ກົມຄຸ້ມຄອງທີ່ດິນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ພ້ອມດ້ວຍບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ໃຫ້ກົມຄຸ້ມຄອງທີ່ດິນ ເຜີຍແຜ່ຂໍ້ຕົກລົງສະບັບນີ້ຜ່ານສື່ມວນຊົນ ເພື່ອໃຫ້ທົ່ວສັງຄົມຮັບຊາບຢ່າງກວ້າງຂວາງ ແລະ ໃຫ້ສັງລວມອອກແບບເນື້ອໃນມາດຖານກຳນົດເວລາ ຂອງຂໍ້ຕົກລົງສະບັບນີ້ ແລະ ເນື້ອໃນອັດຕາຄ່າທຳນຽມ ແລະ ຄ່າບໍລິການ ຂອງຂະແໜງຄຸ້ມຄອງທີ່ດິນ ຕາມຄຳແນະນຳ ສະບັບເລກທີ 1127/ກຊສ, ລົງວັນທີ 04 ມີນາ 2014 ເພື່ອພິມເປັນພິດສະເຕີແຈກຢາຍໃຫ້ຂະແໜງຄຸ້ມຄອງທີ່ດິນ ໃນຂອບເຂດທົ່ວປະເທດ ຕິດປະກາດຢູ່ຈຸດໃຫ້ບໍລິການຂຶ້ນທະບຽນທີ່ດິນ, ອອກໃບຕາດິນ ແລະ ຈົດທະບຽນນິຕິກຳກ່ຽວກັບທີ່ດິນ.

ສຳລັບຂັ້ນຕອນການດຳເນີນງານ ແລະ ການນຳໃຊ້ແບບພິມເອກະສານຕ່າງໆ ໃນການຂຶ້ນທະບຽນທີ່ດິນ, ອອກໃບຕາດິນ ແລະ ຈົດທະບຽນນິຕິກຳກ່ຽວກັບທີ່ດິນ ນັ້ນ ແມ່ນໃຫ້ປະຕິບັດຕາມລະບຽບການສະເພາະ ທີ່ໄດ້ກຳນົດໄວ້.

**ມາດຕາ 5. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ ແລະ ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ນູລົມ ສິນບັນດິດ